008493

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ຫ້ອງການກະຊວງ

ເລກທີ ໒໒໐໒ /ຫກງ

ນະຄອນຫຼວງວຽງຈັນ, ວັນທີ ໒໓/໑໐/໒໐໒໐

## ແຈ້ງການ

**ຮຽນ:** ທ່ານຫົວໜ້າກົມ, ຫົວໜ້າສະຖາບັນ ອ້ອມຂ້າງກະຊວງການເງິນ, ທີ່ເຄົາລົບນັບຖື.

**ເລື່ອງ:** ແຈ້ງການການຈັດແບ່ງ ແລະ ຄຸ້ມຄອງສັນຍານອິນເຕີເນັດຂອງກະຊວງການເງິນ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມ ທິດຊີ້ນໍາຂອງ ທ່ານ ບຸນໂຈມ ອຸບົນປະເສີດ ຮອງລັດຖະມົນຕີກະຊວງການເງິນ ໃນກອງປະຊຸມສ່ອງແສງປະຈໍາເດືອນ ກັນຍາ ແລະ ທິດທາງແຜນ ເດືອນຕຸລາ, ຄັ້ງວັນທີ 12 ຕຸລາ 2020;
- ອີງຕາມ ໜັງສືສະເໜີ ສະບັບເລກທີ 0357/ສພຂງ, ລົງວັນທີ 20 ຕຸລາ 2020.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບກ່ຽວກັບການຈັດແບ່ງ ແລະ ຄຸ້ມຄອງສັນຍານອິນເຕີເນັດ ເພື່ອຮອງຮັບການໃຫ້ບໍລິການລະບົບອອນລາຍ ແລະ ການນໍາໃຊ້ອິນເຕີເນັດຂອງກະຊວງການເງິນ ເປັນຕົ້ນແມ່ນ: ລະບົບແຈ້ງເສຍອາກອນ, ລະບົບແຈ້ງຊັບສິນຂອງລັດ, ເວັບໄຊ ແລະ ອີເມວ ລວມທັງໃຫ້ບໍລິການລະບົບກອງປະຊຸມທາງໄກ (VC) ຂອງກະຊວງການເງິນ. ເຊິ່ງຜ່ານມາ ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ໄດ້ສໍາເລັດຈັດແບ່ງສັນຍານອິນເຕີເນັດ ແລະ ປັບປຸງລະບົບຮັກສາຄວາມປອດໄພຂໍ້ມູນ ພາຍໃນກະຊວງການເງິນຄືນໃໝ່ ດັ່ງນີ້:

1. ເລີ່ມແຕ່ວັນທີ 26 ຕຸລາ 2020 ເປັນຕົ້ນໄປ ລະບົບຄຸ້ມຄອງເຄືອຂ່າຍຈະຕັດສັນຍານ (ບໍ່ອະນຸຍາດ) ໃຫ້ເຂົ້ານໍາໃຊ້ສື່ອອນລາຍ (Social Media) ປະເພດຕ່າງໆເຊັ່ນ : YouTube, Facebook ແລະ ອື່ນໆ. ຊ່ວງເຊົ້າ ເວລາ 8:00 ຫາ 12:00 ແລະ ຊ່ວງບ່າຍ ເວລາ 13:00 ຫາ 16:00, ຍົກເວັ້ນຜູ້ໃຊ້ທີ່ມີຄວາມຈໍາເປັນຕ້ອງໄດ້ນໍາໃຊ້ Social Media ສໍາລັບວຽກງານວິຊາສະເພາະເທົ່ານັ້ນ. ນອກຈາກຊ່ວງເວລາທີ່ໄດ້ກໍານົດນີ້ແລ້ວແມ່ນສາມາດເຂົ້າສື່ອອນລາຍດັ່ງກ່າວໄດ້ຕາມປົກກະຕິ;
2. ສໍາລັບທ່ານທີ່ມີຄວາມຈໍາເປັນຕ້ອງໄດ້ນໍາໃຊ້ Social Media ໃນຊ່ວງເວລາດັ່ງກ່າວ ໃຫ້ປະກອບແບບຟອມລົງທະບຽນນໍາໃຊ້ລະບົບ (ມີແບບຟອມຄັດຕິດມາພ້ອມ) ສົ່ງໃຫ້ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ເປັນຜູ້ອະນຸມັດ ແລະ ສາມາດເຂົ້າໃຊ້ຕາມທີ່ຢູ່ https://fw.mof.gov.la;
3. ສ່ວນ Web ທວງຫ້າມປະເພດຕ່າງໆເປັນຕົ້ນ: ສື່ລາມົກອານາຈານ ແລະ ການພະນັນ ແມ່ນບໍ່ອະນຸຍາດໃຫ້ເຂົ້າໃຊ້ຕະຫຼອດເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ